**໙. ບໍລິສັດກວດສອບ ແມ່ນຫຍັງ?**

ບໍລິສັດກວດສອບ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບປະເພດໜຶ່ງ ຊຶ່ງບໍລິສັດກວດສອບໃນ ສປປ ລາວ ແມ່ນການຈັດຕັ້ງວິຊາຊີບການບັນຊີ ແລະ ກວດສອບຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກ ກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ, ພ້ອມນັ້ນ ຕ້ອງໄດ້ຮັບ ອະນຸຍາດຈາກ ຄຄຊ ເສຍກ່ອນຈຶ່ງສາມາດດຳເນີນການໃຫ້ບໍລິການໃນຂົງເຂດວຽກງານຕະຫຼາດທຶນໄດ້.

ໂດຍພື້ນຖານແລ້ວ ໜ້າທີ່ຕົ້ນຕໍຂອງບໍລິສັດກວດສອບ ແມ່ນຊ່ວຍໃຫ້ບໍລິສັດລູກຄ້າສາມາດປະຕິບັດຕາມ ມາດຕະຖານສາກົນດ້ານການລາຍງານການເງິນ (International Financial Reporting Standard: IFRS) ແລະ ຢັ້ງຢືນຄວາມຖືກຕ້ອງຕໍ່ການກະກຽມ ແລະ ເປີດເຜີຍຂໍ້ມູນທາງການເງິນ ໂດຍສະເພາະແມ່ນເອກະ ສານລາຍງານການເງິນແຕ່ລະໄລຍະ.

ປະຈຸບັນໃນ ສປປ ລາວ ມີບໍລິສັດກວດສອບທີ່ໄດ້ຮັບການຮັບຮອງຈາກ ຄຄຊ ໃຫ້ດຳເນີນທຸລະກິດກ່ຽວ ກັບວຽກງານການກວດສອບດ້ານຫຼັກຊັບ ທັງໝົດ 4 ບໍລິສັດ ຄື: ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີສ໌ ຈຳກັດ, ບໍລິສັດ ເຄພີເອັມຈີລາວ ຈຳກັດ, ບໍລິສັດ ເອີນແອນຢັງ (ລາວ) ຈຳກັດ ແລະ ບໍລິສັດ ດີລອຍ ລາວ ຈຳກັດຜູ້ດຽວ.